# ພຣະທັມປັນຍາຈານ


| | | | | | |
|---|---|---|---|---|---|
| 1 | 2 | 3 | 4 | 5 | 6 |
| 7 | 8 | 9 | 10 | 11 | 12 |


## ປັນຍາຈານ

ECCLESIASTES

### 1 ທຸກຢ່າງກໍອະນິຈັງ

Reflections of a Royal Philosopher

1 ຖ້ອຍຄຳຂອງປັນຍາຈານ ຜູ້ເປັນເຊື້ອສາຍຂອງດາວິດກະສັດໃນກຸງເຢຣູຊາເລັມ
2 ປັນຍາຈານກ່າວວ່າ ອະນິຈັງ ອະນິຈັງ ອະນິຈັງ ອະນິຈັງ ສາຣະພັດອະນິຈັງ
3 ທີ່ມະນຸດທຳງານໜັກກາງແດດ ເຂົາໄດ້ປໂຍດອັນໃດຈາກງານທີ່ເຂົາທຳນັ້ນ
4 ຊົ່ວອາຍຸນຶ່ງຜ່ານໄປ ແລະອີກຊົ່ວອາຍຸນຶ່ງຕ່າວມາ ແຕ່ແຜ່ນດິນໂລກຄົງເດີມຢູ່ເປັນນິດ
5 ດວງອາທິດຂຶ້ນ ແລະດວງອາທິດຕົກ ແລ້ວເຄື່ອນໄປເຖິງທີ່ຊຶ່ງຂຶ້ນມານັ້ນ
6 ລົມພັດໄປທາງທິດໃຕ້ ແລ້ວວຽນກັບໄປທາງເໜືອ ລົມພັດວຽນໄປວຽນມາ ແລ້ວລົມພັດກັບຕາມທາງວຽນ
ຂອງມັນ
7 ແມ່ນ້ຳທັງຫລາຍໄຫລໄປສູ່ທະເລ ແຕ່ທະເລກໍບໍ່ເຕັມ ແມ່ນ້ຳໄຫລໄປສູ່ທີ່ໃດກໍໄຫລໄປສູ່ທີ່ນັ້ນອີກ
8 ສາຣະພັດເມື່ອຍກັນໝົດ ຄົນໃດໆກໍປາກບໍ່ອອກ ດວງຕາກໍເບິ່ງບໍ່ຮູ້ຈັກອີ່ມ ຫລືຫູກໍຟັງບໍ່ເຕັມ
9 ສິ່ງທີ່ເປັນຂຶ້ນແລ້ວຄືສິ່ງທີ່ຈະເປັນຂຶ້ນອີກ ສິ່ງທີ່ທຳກັນແລ້ວ ຄືສິ່ງທີ່ຈະຕ້ອງທຳກັນອີກ ແລະບໍ່ມີສິ່ງໃດໃໝ່
ພາຍໃຕ້ດວງຕາເວັນ
10 ມີອີກສິ່ງນຶ່ງຫລືທີ່ເຂົາຈະເວົ້າໄດ້ວ່າ, “ເບິ່ງແມ, ສິ່ງນີ້ໃໝ່” ສິ່ງນັ້ນມີຢູ່ແລ້ວໃນສມັຍກ່ອນເຮົາທັງຫລາຍ
11 ບໍ່ມີການຈົດຈຳເຖິງສມັຍກ່ອນ ແລະບໍ່ມີການຈົດຈຳສິ່ງລຸນຫລັງທີ່ຈະເກີດມາ ໃນຖ້າມກາງບັນດາຜູ້ທີ່ມາພາຍ
ຫລັງ

The Futility of Seeking Wisdom

12 ຂ້າພະເຈົ້າ ປັນຍາຈານ ເຄີຍເປັນກະສັດເໜືອອິສຣາເອນໃນກຸງເຢຣູຊາເລັມ
13 ແລະຂ້າພະເຈົ້າຕັ້ງໃຈຊອກ ແລະສແວງຫາໂດຍສະຕິປັນຍາ ສິ່ງທີ່ກະທຳກັນພາຍໃຕ້ຟ້າສວັນ ເປັນເຣື່ອງຍາກ
ລຳບາກຊຶ່ງ ພຣະເຈົ້າປະທານໃຫ້ມະນຸດທຳກັນຢູ່ນັ້ນ
14 ຂ້າພະເຈົ້າເຄີຍເຫັນການທັງປວງຊຶ່ງເຂົາກະທຳກັນພາຍໃຕ້ດວງຕາເວັນ ແລະເບິ່ງແມ, ສາຣະພັດກໍອະນິຈັງ ຄື
ກິນລົມກິນແລ້ງ
15 ສິ່ງທີ່ຄົດຈະທຳໃຫ້ຊື່ບໍ່ໄດ້ ແລະສິ່ງທີ່ຂາດຢູ່ຈະນັບໃຫ້ຄົບບໍ່ໄດ້
16 ຂ້າພະເຈົ້າລຳພັນກັບຕົນເອງວ່າ, “ຂ້າພະເຈົ້າມີສະຕິປັນຍາຫລາຍຍິ່ງກວ່າຄົນອື່ນໆທີ່ຄອງຢູ່ເໜືອກຸງເຢຣູຊາ
ເລັມມາກ່ອນຂ້າພະເຈົ້າ ໃຈຂ້າພະເຈົ້າກໍຊຳນິຊຳນານໃນສະຕິປັນຍາແລະຄວາມຮູ້ຢ່າງຍິ່ງ”
17 ຂ້າພະເຈົ້າກໍຕັ້ງໃຈຮູ້ສະຕິປັນຍາ ຮູ້ຄວາມບ້າບໍ ແລະຄວາມໂງ່ ຂ້າພະເຈົ້າສັງເກດເຫັນວ່າເຣື່ອງນີ້ກໍເປັນແຕ່
ກິນລົມກິນແລ້ງດ້ວຍ
18 ເພາະໃນສະຕິປັນຍາຫລາຍໆ ກໍມີຄວາມທຸກຣະທົມຫລາຍ ແລະບຸກຄົນທີ່ເພີ້ມຄວາມຮູ້ກໍເພີ້ມຄວາມເສົ້າໂສກ

# 2

### The Futility of Self-Indulgence

(1 ກສດ 4:20-28)

1 ຂ້າພະເຈົ້າລຳພັນວ່າ, “ມາເຖີດ ມາລອງສນຸກສນານກັນເບິ່ງ ຈົ່ງສນຸກສະບາຍໃຈໄປ” ແຕ່ເບິ່ງດູ ເຣື່ອງນີ້ກໍອະ
ນິຈັງຄືກັນ
2 ຂ້າພະເຈົ້າເວົ້າກ່ຽວກັບການຫົວເລາະວ່າ, “ບ້າໆ ບໍໆ” ແລະກ່າວເຖິງຄວາມສນຸກສນານວ່າ “ມີປໂຍດຫຍັງ”
3 ຂ້າພະເຈົ້າຄິດເບິ່ງວ່າຈະທຳຢ່າງໃດ ກາຍຈຶ່ງຈະຄຶກຄັກດ້ວຍເຫລົ້າອະງຸ່ນ ແລະໃຈຍັງຄົງແນະນຳຂ້າພະເຈົ້າ
ດ້ວຍສະຕິປັນຍາ ແລະຈະຍຶດຄວາມໂງ່ໄວ້ຢ່າງໃດ ຈົນຂ້າພະເຈົ້າຈະເຫັນໄດ້ວ່າ ແມ່ນຫຍັງຈະດີສຳລັບໃຫ້ບັນ
ດາບຸດຂອງມະນຸດທຳພາຍໃຕ້ທ້ອງຟ້າຕລອດຊີວິດຂອງເຂົາ
4 ຂ້າພະເຈົ້າໄດ້ທຳສິ່ງທີ່ຍິ່ງໃຫຍ່ ຂ້າພະເຈົ້າໄດ້ສ້າງເຮືອນຫລາຍຫລັງ ແລະທຳສວນອະງຸ່ນຫລາຍບ່ອນ
5 ຂ້າພະເຈົ້າທຳສວນຜົລໄມ້ ແລະສວນພັກຜ່ອນຢ່ອນໃຈຫລາຍບ່ອນ ປູກຕົ້ນໄມ້ມີຫມາກຫລາຍຢ່າງໄວ້ໃນ
ສວນເຫລົ່ານັ້ນ
6 ຂ້າພະເຈົ້າສ້າງສະນ້ຳຫລາຍສຳລັບຕົນເອງ ເພື່ອຈະໃຊ້ນ້ຳໃນສະນັ້ນທົດຫມູ່ໄມ້ທີ່ກຳລັງງອກງາມ
7 ຂ້າພະເຈົ້າຊື້ທາດຊາຍຍິງໄວ້ ມີທາດເກີດຂຶ້ນໃນບ້ານ ຂ້າພະເຈົ້າມີຝູງງົວ ຝູງແບ້ ຝູງແກະເປັນສົມບັດຫລາຍ
ກວ່າຂອງບັນດາຄົນທີ່ຢູ່ໃນກຸງເຢຣູຊາເລັມກ່ອນຂ້າພະເຈົ້າ
8 ຂ້າພະເຈົ້າສະສົມເງິນທອງໄວ້ ແລະສະສົມຊັບສົມບັດອັນຄວນຄູ່ກັບກະສັດ ແລະຄວນຄູ່ກັບເມືອງທັງຫລາຍ
ຂ້າພະເຈົ້າມີນັກຮ້ອງຊາຍຍິງສຳລັບຕົນ ແລະເມັຽນ້ອຍ ຊຶ່ງເປັນສິ່ງທີ່ປາຖນາຂອງຜູ້ຊາຍ
9 ຂ້າພະເຈົ້າຈຶ່ງເປັນໃຫຍ່ເປັນໂຕກວ່າບັນດາຄົນທີ່ເຄີຍຢູ່ມາກ່ອນຂ້າພະເຈົ້າໃນເຢຣູຊາເລັມ ແລະສະຕິປັນຍາ
ຂອງຂ້າພະເຈົ້າຍັງຄົງຢູ່ກັບຂ້າພະເຈົ້າດ້ວຍ
10 ສິ່ງໃດໆທີ່ຕາຂອງຂ້າພະເຈົ້າຢາກເຫັນ ຂ້າພະເຈົ້າກໍບໍ່ປິດບັງ ຂ້າພະເຈົ້າບໍ່ໄດ້ຫ້າມໃຈຈາກຄວາມສນຸກໃດໆ
ເພາະໃຈຂ້າພະເຈົ້າມີຄວາມເພີດເພີນໃນບັນດາງານຂອງຂ້າພະເຈົ້າ ແລະນີ້ເປັນລາງວັນຈາກງານຂອງຂ້າພະ
ເຈົ້າ
11 ແລ້ວຂ້າພະເຈົ້າຫັນມາເບິ່ງບັນດາສິ່ງທີ່ມືຂ້າພະເຈົ້າໄດ້ທຳ ແລະຄວາມເມື່ອຍທີ່ຂ້າພະເຈົ້າທຸ່ມເທລົງໄປ ແລະ
ເບິ່ງແມ, ທຸກສິ່ງກໍອະນິຈັງ ຄືກິນລົມກິນແລ້ງ ແລະບໍ່ມີປໂຍດອັນໃດພາຍໃຕ້ດວງຕາເວັນ

### Wisdom and Joy Given to One Who Pleases God

12 ຂ້າພະເຈົ້າຈຶ່ງຫັນມາພິເຄາະສະຕິປັນຍາ ຄວາມບ້າບໍ ແລະຄວາມໂງ່ຈ້າ ເພາະຄົນທີ່ມາພາຍຫລັງກະສັດ ຈະ
ທຳສິ່ງໃດໄດ້ແດ່ ເຂົາກໍທຳສິ່ງທີ່ເຂົາທຳກັນມາດົນນານແລ້ວນັ້ນໄດ້
13 ຂ້າພະເຈົ້າເຫັນວ່າສະຕິປັນຍາດີກວ່າຄວາມໂງ່ຈ້າ ເຫມືອນຄວາມສະວ່າງດີກວ່າຄວາມມືດ
14 ຄົນມີສະຕິປັນຍາມີຕາຢູ່ໃນສມອງ ແຕ່ຄົນໂງ່ຈ້າເດີນໃນຄວາມມືດ ແຕ່ຂ້າພະເຈົ້າຍັງເຫັນວ່າ ເຄາະຢ່າງດຽວ
ກັນເກີດຂຶ້ນແກ່ເຂົາທັງມວນ
15 ຂ້າພະເຈົ້ານຶກໃນໃຈວ່າ, “ເຄາະກັມອັນໃດເກີດແກ່ຄົນໂງ່ຈ້າສັນໃດ ກໍຄົງຈະເກີດກັບຂ້າພະເຈົ້າສັນນັ້ນ ຖ້າ
ເຊັ່ນນັ້ນແລ້ວຂ້າພະເຈົ້າຈະມີສະຕິປັນຍາຫລາຍເຮັດຫຍັງ” ຂ້າພະເຈົ້ານຶກໃນໃຈເຣື່ອງນີ້ກໍອະນິຈັງເຫມືອນກັນ
16 ເພາະບໍ່ມີໃຜລະນຶກເຖິງຄົນມີສະຕິປັນຍາເຊັ່ນດຽວກັບຄົນໂງ່ຈ້າ ດ້ວຍເຫັນວ່າໃນອະນາຄົດກໍລືມກັນໄປຫມົດ
ແລ້ວ ຄົນມີສະຕິປັນຍາກໍຕາຍເຫມືອນຄົນໂງ່ຈ້າ
17 ຂ້າພະເຈົ້າຈຶ່ງກຽດຊັງຊີວິດ ເພາະວ່າວຽກງານທີ່ເຂົາທຳກັນພາຍໃຕ້ດວງຕາເວັນ ກໍ່ຄວາມສລົດໃຈໃຫ້ແກ່ຂ້າ
ພະເຈົ້າ ເພາະສາຣະພັດກໍອະນິຈັງຄືກິນລົມກິນແລ້ງ

18 ຂ້າພະເຈົ້າຊັງວຽກງານທັງສິ້ນຂອງຂ້າພະເຈົ້າ ຊຶ່ງຂ້າພະເຈົ້າໄດ້ທຳຢູ່ພາຍໃຕ້ດວງຕາເວັນ ເພາະຂ້າພະເຈົ້າຈະຕ້ອງປະສິ່ງເຫລົ່ານັ້ນໄວ້ໃຫ້ແກ່ຄົນທີ່ມາພາຍຫລັງຂ້າພະເຈົ້າ

19 ແລ້ວໃຜຈະໄປຮູ້ວ່າຄົນໆນັ້ນຈະເປັນຄົນມີສະຕິປັນຍາຫລືຄົນໂງ່ຈ້າ ປານນັ້ນເຂົາກໍຄອບຄອງບັນດາການງານຂອງຂ້າພະເຈົ້າ ທີ່ຂ້າພະເຈົ້າໄດ້ທຳຢ່າງໜັກໜ່ວງມາ ແລະທີ່ຂ້າພະເຈົ້າໃຊ້ສະຕິປັນຍາທຳພາຍໃຕ້ດວງຕາເວັນ

20 ຂ້າພະເຈົ້າຈຶ່ງກັບອັດອັ້ນຕັນໃຈເຖິງເຣື່ອງການງານຂອງຂ້າພະເຈົ້າ ຊຶ່ງຂ້າພະເຈົ້າໄດ້ທຳມາພາຍໃຕ້ດວງຕາເວັນ

21 ດ້ວຍວ່າມີຄົນທີ່ທຳງານໂດຍໃຊ້ສະຕິປັນຍາ ຄວາມຮູ້ ແລະຄວາມຊຳນານ ແຕ່ແລ້ວກໍປະສິ່ງເຫລົ່ານັ້ນໃຫ້ເປັນສ່ວນຂອງອີກຄົນນຶ່ງທີ່ບໍ່ໄດ້ອອກແຮງທຳເພື່ອການນັ້ນ ນີ້ກໍອະນິຈັງດ້ວຍແລະບໍ່ຖືກຕ້ອງເລີຍ

22 ເພາະວ່າເຂົາໄດ້ອັນໃດຈາກບັນດາງານທີ່ທຳໜັກໜ່ວງ ທັງວິຕົກກັງວົນທີ່ເຂົາຕ້ອງທຳພາຍໃຕ້ດວງຕາເວັນ

23 ດ້ວຍວ່າປີ ເດືອນຂອງເຂົາມີແຕ່ຄວາມເຈັບປວດ ແລະກິຈທຸຣະຂອງເຂົາກໍ່ຄວາມສລົດໃຈ ເຖິງກາງຄືນຈິດໃຈຂອງເຂົາກໍບໍ່ໄດ້ຢຸດພັກສງົບ ນີ້ກໍອະນິຈັງດ້ວຍ

24 ສຳລັບມະນຸດນັ້ນ ບໍ່ມີອັນໃດດີໄປກວ່າກິນແລະດື່ມ ກັບຫາຄວາມຊື່ນບານໃນການງານຂອງເຂົາ ນີ້ແຫລະຂ້າພະເຈົ້າເຫັນວ່າເປັນມາຈາກພຣະຫັດຂອງພຣະເຈົ້າ

25 ຖ້າບໍ່ອາສັຍພຣະອົງແລ້ວ ໃຜຈະກິນໄດ້ບໍ່ ຫລືໃຜຈະມີຄວາມຊື່ນບານໄດ້

26 ເພາະວ່າພຣະເຈົ້າປະທານສະຕິປັນຍາ ຄວາມຮູ້ ແລະຄວາມຍິນດີໃຫ້ແກ່ຄົນທີ່ພຣະອົງຊົງພໍພຣະທັຍ ແຕ່ສ່ວນຄົນບາບພຣະອົງປະທານງານທີ່ຕ້ອງເກັບກ່ຽວແລະສະສົມ ເພື່ອໃຫ້ແກ່ຜູ້ທີ່ພຣະເຈົ້າພໍພຣະທັຍ ນີ້ກໍອະນິຈັງດ້ວຍຄືກົນລົມກົນແລ້

## 3 ມີເວລາສຳລັບທຸກສິ່ງ

Everything Has Its Time

1 ມີຣະດູການສຳລັບທຸກສິ່ງ ແລະມີເວລາສຳລັບເຣື່ອງລາວທຸກຢ່າງພາຍໃຕ້ຟ້າສວັນ

2 ມີເວລາເກີດ ແລະເວລາຕາຍ ມີເວລາປູກ ແລະເວລາຫລົກສິ່ງທີ່ປູກຖິ້ມ

3 ມີເວລາຂ້າ ແລະເວລາຮັກສາໃຫ້ຫາຍ ມີເວລາມ້າງລົງ ແລະເວລາກໍ່ສ້າງຂຶ້ນ

4 ມີເວລາຮ້ອງໄຫ້ ແລະເວລາຫົວເລາະ ມີເວລາໄວ້ທຸກ ແລະເວລາເຕັ້ນຣຳ

5 ມີເວລາໂຍນຫີນຖິ້ມ ແລະເວລາເກັບຮວບຮວມຫີນ ມີເວລາສວມກອດ ແລະເວລາງົດເວັ້ນການສວມກອດ

6 ມີເວລາສແວງຫາ ແລະເວລາສູນເສັຽ ເວລາເກັບຮັກສາໄວ້ ແລະເວລາໂຍນຖິ້ມໄປ

7 ມີເວລາຈີກຂາດ ແລະເວລາຫຍິບ ເວລາມິດ ເວລາເວົ້າ

8 ມີເວລາຮັກ ແລະເວລາຊັງ ເວລາສົງຄາມ ແລະເວລາສັນຕິ

The God-Given Task

9 ຄົນງານໄດ້ກຳໄລອັນໃດຈາກການງານຂອງເຂົາ

10 ຂ້າພະເຈົ້າເຫັນທຸຣະກິດຊຶ່ງພຣະເຈົ້າປະທານໃຫ້ມະນຸດທຳ

11 ພຣະອົງຊົງກະທຳໃຫ້ສັພສິ່ງງົດງາມຕາມຣະດູການຂອງມັນ ພຣະອົງຊົງບັນຈຸນິຣັນດອນໄວ້ໃນຈິດໃຈຂອງມະນຸດ ແຕ່ມະນຸດຍັງເບິ່ງບໍ່ເຫັນວ່າພຣະເຈົ້າຊົງກະທຳອັນໃດໄວ້ ຕັ້ງແຕ່ປະຖົມມະການຈົນເຖິງສຸດປາຍ

12 ຂ້າພະເຈົ້າຮູ້ແລ້ວວ່າສຳລັບເຂົາບໍ່ມີອັນໃດທີ່ຈະດີໄປກວ່າຄວາມຍິນດີແລະລ້າເລີງຕລອດຊີວິດ

13 ແລະວ່າເປັນຂອງປະທານຈາກພຣະເຈົ້າແກ່ມະນຸດ ທີ່ຈະໃຫ້ມະນຸດໄດ້ກິນດື່ມແລະເພີດເພີນໃນບັນດາການງານຂອງເຂົາ

14 ຂ້າພະເຈົ້າຮູ້ຢູ່ວ່າສາຣະພັດທີ່ພຣະເຈົ້າຊົງກະທຳກໍດຳຣົງຢູ່ເປັນນິດ ຈະເພີ້ມເຕີມສິ່ງໃດເຂົ້າໄປອີກກໍບໍ່ໄດ້ ຫລືຈະເອົາສິ່ງໃດອອກເສັຽກໍບໍ່ໄດ້ ພຣະເຈົ້າຊົງກະທຳເຊັ່ນນັ້ນ ເພື່ອໃຫ້ຄົນທັງຫລາຍມີຄວາມຢຳເກງຕໍ່ພຣະພັກພຣະອົງ

15 ສິ່ງໃດໆຊຶ່ງເປັນຢູ່ໃນປະຈຸບັນກໍເປັນຢູ່ນານມາແລ້ວ ສິ່ງໃດໆທີ່ຈະເປັນມາກໍເຄີຍເປັນຢູ່ນານມາແລ້ວ ແລະພຣະເຈົ້າຊົງສແວງສິ່ງໃດໆທີ່ລ່ວງໄປນັ້ນ

Judgment and the Future Belong to God

16 ນອກຈາກນີ້ ທີ່ພາຍໃຕ້ດວງຕາເວັນຂ້າພະເຈົ້າເຫັນວ່າ ໃນທີ່ຂອງຄວາມຍຸດຕິທັມມີຄວາມອະທັມຢູ່ດ້ວຍ ແລະໃນທີ່ຂອງຄວາມຊອບທັມມີຄວາມອະທັມຢູ່ດ້ວຍ

17 ຂ້າພະເຈົ້ານຶກໃນໃຈຂອງຂ້າພະເຈົ້າວ່າ ພຣະເຈົ້າຈະຊົງພິພາກສາຄົນຊອບທັມແລະຄົນອະທັມ ເພາະມີການກຳນົດໄວ້ສຳລັບທຸກເຣື່ອງ ແລະສຳລັບການງານທຸກຢ່າງ

18 ຂ້າພະເຈົ້ານຶກໃນໃຈຂອງຂ້າພະເຈົ້າກ່ຽວກັບບັນດາບຸດຂອງມະນຸດວ່າ ພຣະເຈົ້າຊົງທົດສອບເຂົາເພື່ອຈະສຳແດງວ່າເຂົາບໍ່ດີລື່ນສັດ

19 ເພາະວ່າເຄາະຂອງບັນດາມະນຸດຊາດກັບເຄາະຂອງສັດເດັຽຣະສານນັ້ນເຫມືອນກັນ ຝ່າຍນຶ່ງຕາຍ ອີກຝ່າຍນຶ່ງກໍຕາຍເຫມືອນກັນ ທັງສອງມີລົມຫາຍໃຈຢ່າງດຽວກັນ ແລະມະນຸດບໍ່ມີຫຍັງດີກວ່າສັດເດັຽຣະສານ ເພາະສາຣະພັດກໍອະນິຈັງ

20 ທຸກຢ່າງໄປຍັງທີ່ດຽວກັນ ທຸກຢ່າງເປັນມາຈາກຝຸ່ງຂີ້ດິນ ແລະທຸກຢ່າງກັບເປັນຝຸ່ງຂີ້ດິນອີກ

21 ໃຜຮູ້ວ່າຈິດວິນຍານຂອງມະນຸດໄປສູ່ເບື້ອງເທິງຫລືບໍ່ ແລະວິນຍານຂອງສັດເດັຽຣະສານລົງໄປສູ່ພິພົບໂລກຫລືບໍ່

22 ເຫດສັນນັ້ນຂ້າພະເຈົ້າຈຶ່ງເຫັນວ່າ ບໍ່ມີສິ່ງໃດດີໄປກວ່າທີ່ມະນຸດຈະຍິນດີໃນການງານຂອງຕົນ ດ້ວຍວ່ານັ້ນເປັນສ່ວນຂອງເຂົາ ໃຜຈະນຳເຂົາໃຫ້ເຫັນວ່າສິ່ງໃດຈະເປັນມາພາຍຫລັງເຂົາ

4

Chapter 4

1 ຂ້າພະເຈົ້າເຫັນບັນດາການຂົ່ມເຫັງທີ່ເກີດຂຶ້ນພາຍໃຕ້ດວງຕາເວັນອີກ ແລະເບິ່ງດູ ນ້ຳຕາຂອງຜູ້ທີ່ຖືກຂົ່ມເຫັງບໍ່ມີຄົນເລົ້າໂລມເຂົາ ຝ່າຍຜູ້ຂົ່ມເຫັງນັ້ນກຸມອຳນາດ ແຕ່ບໍ່ມີຜູ້ໃດເລົ້າໂລມເຂົາ

2 ເພາະສະນັ້ນຂ້າພະເຈົ້າສະແດງຄວາມຍິນດີວ່າ ຄົນຕາຍທີ່ຕາຍໄປແລ້ວມີໂຊກດີກວ່າຄົນເປັນທີ່ຍັງເປັນຢູ່

3 ຄົນທີ່ຍັງບໍ່ເປັນມາ ທີ່ບໍ່ເຫັນການຊົ່ວທີ່ເກີດຂຶ້ນພາຍໃຕ້ດວງຕາເວັນ ກໍຍິ່ງດີກວ່າຄົນທັງສອງຈຳພວກນັ້ນ

4 ແລ້ວຂ້າພະເຈົ້າເຫັນວ່າບັນດາການງານຫນັກຫນ່ວງ ແລະບັນດາສີມືໃນການງານມາຈາກຄວາມອິດສາຂອງຄົນທີ່ມີຕໍ່ເພື່ອນບ້ານຂອງຕົນ ນີ້ກໍອະນິຈັງດ້ວຍ ຄືກິນລົມກິນແລ້ງ

5 ຄົນໂງ່ງໍມື ແລະກິນເນື້ອຂອງຕົນເອງ

6 ຄວາມສງົບສຸກກຳມືນຶ່ງຍັງດີກວ່າການງານຫນັກສອງກຳມືແລະການກິນລົມກິນແລ້ງ

7 ແລ້ວຂ້າພະເຈົ້າເຫັນອະນິຈັງພາຍໃຕ້ດວງຕາເວັນອີກ

8 ຄື ຄົນນຶ່ງຢູ່ຕົວຄົນດຽວ ບໍ່ມີບຸດ ຫລືພີ່ນ້ອງ ແຕ່ເຂົາທຳງານບໍ່ຢຸດຢ່ອນ ຕາຂອງເຂົາບໍ່ເຄີຍອີ່ມຄວາມຮັ່ງມີ ເຂົາບໍ່ເຄີຍຄິດວ່າ, “ຂ້າພະເຈົ້າທຳງານຫນັກຫນ່ວງ ແລະຕົວຂ້າພະເຈົ້າອົດໆ ຢາກໆ ເພື່ອຜູ້ໃດ” ນີ້ກໍອະນິຈັງດ້ວຍ ແລະເປັນເຣື່ອງວິຕົກກັງວົນ

The Value of A Friend

9 ສອງຄົນດີກວ່າຄົນດຽວ ເພາະວ່າເຂົາທັງສອງໄດ້ຮັບຜົນຂອງງານດີ

10 ດ້ວຍວ່າຖ້າຄົນນຶ່ງລົ້ມລົງ ອີກຄົນນຶ່ງຈະໄດ້ຈູງເພື່ອນຂອງຕົນໃຫ້ລຸກຂຶ້ນ ແຕ່ວິບັດແກ່ຄົນນັ້ນທີ່ຢູ່ຄົນດຽວເມື່ອເຂົາລົ້ມລົງ ແລະບໍ່ມີຜູ້ອື່ນຈູງຍົກເຂົາໃຫ້ລຸກຂຶ້ນ
11 ອັນນຶ່ງ ຖ້າສອງຄົນນອນຢູ່ດ້ວຍກັນ ເຂົາກໍອົບອຸ່ນ ແຕ່ຖ້ານອນຄົນດຽວຈະອຸ່ນໄດ້ຢ່າງໃດ
12 ແມ້ຄົນນຶ່ງສູ້ຄົນດຽວໄດ້ ສອງຄົນຄົງສູ້ເຂົາໄດ້ແນ່ນອນ ເຊືອກສາມກຽວຈະຂາດງ່າຍກໍບໍ່ໄດ້
13 ຄົນຫນຸ່ມຍາກຈົນແລະມີສະຕິປັນຍາກໍດີກວ່າກະສັດເຖົ້າຊະຣາ ແລະໂງ່ຈ້າ ຜູ້ຮັບຄຳແນະນຳອີກບໍ່ໄດ້ແລ້ວ
14 ເຖິງແມ່ນທ່ານອອກມາຈາກເຮືອນຈຳແລ້ວຂຶ້ນເປັນກະສັດ ຫລືເກີດເປັນຄົນຍາກຈົນໃນຣາຊອານາຈັກຂອງທ່ານເອງ
15 ຂ້າພະເຈົ້າເຫັນບັນດາຄົນທີ່ມີຊີວິດເຄື່ອນໄຫວຢູ່ພາຍໃຕ້ດວງຕາເວັນ ທັງຫນຸ່ມຄົນນັ້ນທີ່ຈະຂຶ້ນໄປແທນທ່ານ
16 ປະຊາຊົນຜູ້ຊື່ງທ່ານຢູ່ເຫນືອນັ້ນບໍ່ມີທີ່ສິ້ນສຸດ ແຕ່ບັນດາຄົນທີ່ມາພາຍຫລັງກໍບໍ່ຍິນດີໃນທ່ານ ແນ່ນອນ ນີ້ກໍອະນິຈັງດ້ວຍ ຄືກົນລົມກິນແລ້ງ

## 5 ຄວາມໂງ່ຈ້າຂອງການສັນຍາບໍ່ຮອບຄອບ

Reverence, Humility, and Contentment

1 ເຈົ້າຈົ່ງລະວັງບາດຍ່າງຂອງເຈົ້າ ເມື່ອເຈົ້າໄປຍັງພຣະວິຫານຂອງພຣະເຈົ້າ ເພາະການເຂົ້າໃກ້ຊິດເພື່ອຈະຟັງກໍດີກວ່າຄົນໂງ່ຖວາຍເຄື່ອງບູຊາ ດ້ວຍວ່າເຂົາບໍ່ຮູ້ວ່າຕົນກຳລັງທຳຊົ່ວ
2 ຄິດກ່ອນຈຶ່ງເວົ້າ ແລະຢ່າຟ້າວຕັດສິນໃຈຄຳສັນຍາໃດໆກັບພຣະເຈົ້າ ເພາະວ່າພຣະເຈົ້າຊົງສະຖິດໃນສວັນ ແລະເຈົ້າຢູ່ເທິງແຜ່ນດິນໂລກ ເຫດສະນັ້ນເຈົ້າຈົ່ງເວົ້າຫນ້ອຍຄຳ
3 ຝັນເມື່ອມີງານຫລາຍ ແລະມີສຽງຄົນໂງ່ຈ້າເມື່ອເວົ້າຫລາຍ
4 ເມື່ອເຈົ້າປະຕິຍານບະບົນໄວ້ຕໍ່ພຣະເຈົ້າ ຢ່າຊ້າທີ່ຈະແກ້ບະບົນນັ້ນໃຫ້ສຳເຣັດ ເພາະພຣະອົງບໍ່ພໍພຣະທັຍກັບຄົນໂງ່ຈ້າ ຈົ່ງແກ້ບະບົນຕາມທີ່ເຈົ້າບະບົນໄວ້ເຖີດ
5 ທີ່ເຈົ້າຈະບໍ່ບະບົນກໍຍັງດີກວ່າທີ່ເຈົ້າບະບົນແລ້ວບໍ່ແກ້
6 ຢ່າໃຫ້ປາກຂອງເຈົ້າເປັນເຫດນຳຕົວເຈົ້າໃຫ້ກະທຳຜິດໄປ ແລະຢ່າເວົ້າຕໍ່ຫນ້າຜູ້ນຳຂ່າວຂອງພຣະເຈົ້າວ່າ ນີ້ແຫລະເປັນຄວາມເຜີຕົວໄປ ເຫດໃດຈະໃຫ້ພຣະເຈົ້າຊົງພິໂຣດເພາະສຽງເວົ້າຂອງເຈົ້າ ແລ້ວເລີຍຊົງທຳລາຍການງານແຫ່ງນໍ້າມືຂອງເຈົ້າເສັຽ
7 ເພາະວ່າເມື່ອຝັນຫລາຍ ຄຳເວົ້າຖ່ອຍໆກໍຫລາຍ ເຈົ້າຈົ່ງຢຳເກງພຣະເຈົ້າເຖີດ

**ຄວາມອະນິຈັງແຫ່ງຊີວິດ**

8 ຖ້າເຈົ້າເຫັນຄົນຈົນໃນເມືອງຖືກຂົ່ມເຫັງກໍດີ ເຫັນຄວາມຍຸດຕິທັມ ແລະສິດທິຖືກປະຕິເສດເອົາໄປເສັຽກໍດີ ເຈົ້າຢ່າປລາດໃຈໃນເຣື່ອງນັ້ນ ດ້ວຍວ່າມີເຈົ້າຫນ້າທີ່ຄອຍຈັບຕາເຈົ້າຫນ້າທີ່ຢູ່ ແລ້ວຍັງມີຜູ້ສູງກວ່າອີກຊັ້ນນຶ່ງຈັບຕາຢູ່ເຫນືອພວກເຂົາທັງສິ້ນ
9 ນອກຈາກນີ້ ຜົນປໂຍດແຫ່ງແຜ່ນດິນໂລກ ກໍຢູ່ທີ່ເຂົາເຫລົ່ານັ້ນທັງຫມົດ ໄຮ່ນາໃດໆກໍຍ່ອມມີກະສັດຢູ່ເຫນືອ
10 ຄົນຮັກເງິນຍ່ອມບໍ່ອີ່ມເງິນ ແລະຄົນຮັກສົມບັດບໍ່ຮູ້ຈັກອີ່ມກຳໄລນີ້ກໍອະນິຈັງດ້ວຍ
11 ເມື່ອຂອງດີເພີ້ມພູນຂຶ້ນ ຄົນກິນກໍມີຫລວງຫລາຍຂຶ້ນ ຄົນທີ່ເປັນເຈົ້າຂອງຊັບຈະໄດ້ປໂຍດອັນໃດ ນອກຈາກຈະໄດ້ຊົມຫລິ້ນເປັນຂວັນຕາເທົ່ານັ້ນ
12 ການຫລັບຂອງກຳມະກອນກໍຜາສຸກບໍ່ວ່າເຂົາຈະໄດ້ກິນຫນ້ອຍຫລືໄດ້ກິນຫລາຍ ແຕ່ຄວາມອີ່ມທ້ອງຂອງຄົນຮັ່ງມີກໍບໍ່ຊ່ອຍເຂົາໃຫ້ຫລັບ
13 ຍັງມີສິ່ງຊົ່ວຊ້າອັນຫນ້າສລົດໃຈອີກຢ່າງນຶ່ງ ທີ່ຂ້າພະເຈົ້າເຫັນພາຍໃຕ້ດວງຕາເວັນ ຄືຊັບສົມບັດທີ່ເຈົ້າຂອງໄດ້ເກັບໄວ້ຈົນເກີດເປັນພັຍແກ່ຕົນ

14 ແລະຊັບສົມບັດນັ້ນສູນເສັຽໄປໂດຍການລົງທຶນທີ່ບໍ່ດີ ແລະໄດ້ບຸດຊາຍຄົນນຶ່ງເຂົາກໍເປັນຄົນສິ້ນເນື້ອປະດາຕົວ

15 ເຂົາໄດ້ຄອດອອກຈາກທ້ອງມານດາຕົວເປືອຍກາຍສັນໃດ ເຂົາຈະກັບໄປອີກເຊັ່ນດຽວກັນສັນນັ້ນ ແລະເຂົາຈະເອົາອັນໃດຊຶ່ງເປັນຜົນງານຂອງເຂົາຕິດມືໄປບໍ່ໄດ້ຈັກຢ່າງດຽວ

16 ນີ້ເປັນສິ່ງອັນຫນ້າສລົດໃຈອີກ ຄືເຂົາໄດ້ເກີດມາຢ່າງໃດເຂົາກໍຕ້ອງໄປຢ່າງນັ້ນ ເຂົາຈະໄດ້ປໂຍດອັນໃດທີ່ເຂົາໄດ້ລົງແຮງເພື່ອລົມແລ້ງ

17 ອັນນຶ່ງ ເຂົາມີຊີວິດຢູ່ໃນຄວາມມືດຕລອດປີເດືອນຂອງເຂົາ ເຂົາມີຄວາມຫຍຸ້ງໃຈຢ່າງສາຫັດ ມີຄວາມເຈັບໄຂ້ແລະມີໂມໂຫໂຫໂສ

18 ເບິ່ງແມ, ທີ່ຂ້າພະເຈົ້າເຫັນຊອບ ແລະສົມຄວນ ຄືໃຫ້ກິນແລະດື່ມ ກັບຍິນດີໃນບັນດາກິຈການຂອງຕົນ ທີ່ຕົນກະທຳພາຍໃຕ້ດວງຕາເວັນ ຕລອດຊົ່ວອາຍຸອັນສັ້ນໆຂອງຕົນທີ່ພຣະເຈົ້າປະທານແກ່ຕົນເພາະການນີ້ແຫລະເປັນສ່ວນຂອງຕົນ

19 ອັນນຶ່ງທຸກໆຄົນທີ່ພຣະເຈົ້າປະທານຊັບສົມບັດໃຫ້ ກໍໄດ້ຊົງໂຜດໃຫ້ຮັບປະທານຂອງເຫລົ່ານັ້ນໄດ້ຮັບສ່ວນຂອງຕົນ ແລະຍິນດີໃນການງານຂອງຕົນໄດ້ ນີ້ແຫລະເປັນຂອງປະທານຈາກພຣະເຈົ້າ

20 ເຂົາຈະໄດ້ບໍ່ຕ້ອງນຶກເຖິງປີເດືອນແຫ່ງຊີວິດຂອງຕົນຫລາຍ ເພາະພຣະເຈົ້າໃຫ້ໃຈເຂົາສາລະວົນຢູ່ກັບຄວາມຊື່ນໃຈ

# 6

The Frustration of Desires

1 ມີສິ່ງສາມານຢ່າງນຶ່ງທີ່ຂ້າພະເຈົ້າເຫັນພາຍໃຕ້ດວງຕາເວັນ ແລະສິ່ງນັ້ນຫນັກແກ່ມະນຸດ

2 ຄືມະນຸດຄົນໃດທີ່ພຣະເຈົ້າປະທານຊັບສົມບັດ ສິ່ງຂອງແລະຍົດຖາບັນດາສັກໃຫ້ ຈົນສິ່ງໃດໆທີ່ເຂົາປາຖນາສຳລັບຕົນ ເຂົາກໍມີຄົບບໍ່ຂາດເລີຍ ແຕ່ພຣະເຈົ້າບໍ່ໄດ້ຊົງໂຜດໃຫ້ເຂົາຊື່ນໃຈໃຊ້ສິ່ງນັ້ນ ຄົນນອກບ້ານນອກເມືອງກັບເອົາໄປຊື່ນໃຈໃຊ້ເສັຽ ນີ້ກໍເປັນອະນິຈັງ ແລະເປັນຄວາມທຸກໃຈຢ່າງຮ້າຍແຮງ

3 ແມ້ວ່າມະນຸດຄົນໃດມີລູກເຖິງຮ້ອຍຄົນ ແລະມີອາຍຸຢູ່ຫລາຍປີຈົນປີເດືອນຂອງເຂົາມີຫລວງຫລາຍ ແຕ່ຈິດໃຈຂອງເຂົາບໍ່ໄດ້ອີ່ມດ້ວຍຂອງດີ ນອກຈາກນີ້ ເຂົາບໍ່ມີງານຝັງສົບຂອງຕົນດ້ວຍ ຂ້າພະເຈົ້າວ່າລູກທີ່ເກີດມາແທ້ງເສັຽຍັງດີກວ່າຄົນນັ້ນ

4 ເພາະເດັກນັ້ນເກີດມາອະນິຈັງ ແລະຕາຍໄປໃນຄວາມມືດ ແລະຊື່ຂອງເຂົາຖືກປົດໄວ້ໃນຄວາມມືດ

5 ນອກຈາກນີ້ ຍັງບໍ່ທັນເຫັນຕາເວັນ ຫລືຍັງບໍ່ທັນຮູ້ເຣື່ອງຣາວອັນໃດ ເດັກຄົນນີ້ມີຄວາມສງົບສຸກຍິ່ງກວ່າຜູ້ໃຫຍ່ນັ້ນເສັຽອີກ

6 ແມ້ວ່າເຂົາມີຊີວິດຢູ່ພັນປີທະວີອີກເທົ່າຕົວ ແຕ່ບໍ່ໄດ້ເຫັນຂອງດີອັນໃດ ທຸກຄົນບໍ່ໄດ້ລົງໄປທີ່ບ່ອນດຽວກັນຫມົດຫລື

7 ບັນດາການງານຂອງມະນຸດກໍເພື່ອປາກຂອງເຂົາ ແຕ່ເຖິງປານນັ້ນເຂົາກໍບໍ່ຮູ້ຈັກອີ່ມ

8 ດ້ວຍວ່າຄົນມີສະຕິປັນຍາໄດ້ປຽບອັນໃດກວ່າຄົນໂງ່ ຫລືຄົນຍາກຈົນທີ່ຮູ້ຈັກປະພຶດຕົວຢູ່ຕໍ່ຫນ້າຄົນທີ່ມີຊີວິດກໍໄດ້ປຽບອັນໃດ

9 ເຫັນແລ້ວກັບຕາກໍດີກວ່າການປ່ອຍໄປຕາມຄວາມປາຖນາ ນີ້ຄືອະນິຈັງດ້ວຍ ຄືກິນລົມກິນແລ້ງ

10 ສິ່ງໃດຊຶ່ງມີຢູ່ດຽວນີ້ ເຂົາໄດ້ໃຊ້ຊື່ເອີ້ນສິ່ງນັ້ນນານມາແລ້ວ ແລະກໍຮູ້ກັນແລ້ວວ່າມະນຸດຄືຫຍັງ ແລະເຂົາບໍ່ອາດໂຕ້ຖຽງກັບພຣະອົງຜູ້ຊົງຣິດເດຊາກວ່າຕົນໄດ້

11 ເມື່ອເວົ້າຫລາຍກໍຍິ່ງອະນິຈັງຫລາຍແລ້ວຈະເປັນປໂຍດອັນໃດແກ່ມະນຸດ

12 ໃຜຄົນໃດຮູ້ວ່າສິ່ງໃດເປັນສິ່ງທີ່ດີສຳລັບມະນຸດ ໃນຊີວິດນີ້ ຄືໃນລະຍະວັນເດືອນປີທັງຫລາຍແຫ່ງຊີວິດຂອງຕົນທີ່ໄດ້ເສັງໄປດຸດດັ່ງເງົາ ຫລືໃຜຜູ້ໃດອາດບອກກັບມະນຸດໄດ້ວ່າ ສິ່ງນີ້ສິ່ງນັ້ນຈະເກີດຂຶ້ນພາຍຫລັງຕົນທີ່ພາຍໃຕ້ດວງອາທິດ

## 7 ຄວາມປະເສີດຂອງສະຕິປັນຍາ

A Disillusioned View of Life

1 ຊື່ສຽງດີກໍປະເສີດກວ່ານໍ້າມັນຫອມຢ່າງວິເສດ ແລະວັນຕາຍກໍດີກວ່າວັນເກີດ

2 ໄປຍັງເຮືອນທີ່ມີການໄວ້ທຸກ ກໍດີກວ່າໄປຍັງເຮືອນທີ່ມີການລ້ຽງກັນ ເພາະນັ້ນເປັນວາຣະສຸດທ້າຍຂອງມະນຸດທັງປວງ ແລະຜູ້ທີ່ຍັງມີຊີວິດຢູ່ຈະເອົາເຫດການນັ້ນໃສ່ໄວ້ໃນໃຈ

3 ຄວາມໂສກເສົ້າກໍດີກວ່າການຫົວເລາະ ເພາະຄວາມໂສກເສົ້າໃນໃບຫນ້າທຳໃຫ້ຈິດໃຈຍິນດີ

4 ຈິດໃຈຂອງຄົນທີ່ມີສະຕິປັນຍາ ຍ່ອມຢູ່ໃນເຮືອນທີ່ມີຄວາມໂສກເສົ້າ ແຕ່ຈິດໃຈຂອງຄົນໂງ່ ຍ່ອມຢູ່ໃນເຮືອນທີ່ມີການສນຸກສນານ

5 ຟັງຄຳຕຳຫນິຂອງຄົນທີ່ມີສະຕິປັນຍາ ຍັງດີກວ່າຟັງເພງຂອງຄົນໂງ່

6 ມີສຽງແຕກຂອງຮຽວຫນາມຢູ່ໃຕ້ຫມໍ້ສັນໃດ ສຽງຫົວເລາະຂອງຄົນໂງ່ຈ້າກໍສັນນັ້ນ ນີ້ກໍອະນິຈັງດ້ວຍ

7 ແທ້ຈິງການກົດຂີ່ຂົ່ມເຫັງກະທຳໃຫ້ຜູ້ມີສະຕິປັນຍາໂງ່ໄປ ແລະສິນບົນກໍກະທຳໃຫ້ຄວາມເຂົ້າໃຈເສັຽໄປ

8 ເບື້ອງປາຍແຫ່ງສິ່ງໃດໆກໍດີກວ່າເບື້ອງຕົ້ນແຫ່ງສິ່ງນັ້ນໆ ມີໃຈອົດກັ້ນກໍດີກວ່າມີໃຈຈອງຫອງ

9 ຢ່າໃຫ້ໃຈຂອງເຈົ້າຄຽດໄວ ເພາະຄວາມຄຽດມີປະຈຳຢູ່ໃຈຊວງເອິກຂອງຄົນໂງ່

10 ຢ່າວ່າ, "ອັນໃດຫນໍເປັນເຫດໃຫ້ການເວລາກ່ອນດີກວ່າການເວລາບັດນີ້" ເພາະທີ່ເຈົ້າໄດ້ຖາມນັ້ນບໍ່ໄດ້ຖາມດ້ວຍສະຕິປັນຍາ

11 ສະຕິປັນຍາປະກອບກັບມໍຣະດົກກໍເປັນຂອງດີ ເປັນປໂຍດແກ່ຄົນທີ່ໄດ້ເຫັນດວງຕາເວັນ

12 ເງິນເປັນເຄື່ອງປ້ອງກັນສັນໃດ ສະຕິປັນຍາກໍເປັນເຄື່ອງປ້ອງກັນສັນນັ້ນ ແລະຜົນປໂຍດຂອງຄວາມຮູ້ ຄືສະຕິປັນຍາ ຍ່ອມຮັກສາຊີວິດຂອງຜູ້ທີ່ມີສະຕິປັນຍານັ້ນ

13 ຈົ່ງພິຈາຣະນາພຣະຣາຊກິດຂອງພຣະເຈົ້າ ສິ່ງໃດໆທີ່ພຣະອົງຊົງກະທຳໃຫ້ຄົດຢູ່ແລ້ວ ໃຜຈະຢຽດສິ່ງນັ້ນໆໃຫ້ຊື່ໄປໄດ້

14 ເມື່ອເວລາມີຄວາມຈະເຣີນກໍຈົ່ງຊື່ນຊົມຍິນດີ ແຕ່ເມື່ອເຖິງເວລາອັນຈົນກໍຈົ່ງພິນິດພິຈາຣະນາ ພຣະເຈົ້າຊົງບັນດານໃຫ້ມີທັງສອງຢ່າງເພື່ອມະນຸດຈະບໍ່ຄົ້ນໄດ້ວ່າເມື່ອເຂົາລ່ວງໄປແລ້ວຈະມີອັນໃດມາ

The Riddles of Life

15 ຂ້າພະເຈົ້າເຫັນສິ່ງເຫລົ່ານີ້ທັງສິ້ນໃນຊີວິດອະນິຈັງຂອງຂ້າພະເຈົ້າ ຄືຄົນຊອບທັມພິນາດໃນຄວາມຊອບທັມຂອງຕົນ ແລະມີຄົນອະທັມມີຊີວິດຍືນຍາວໃນການກະທຳຊົ່ວ

16 ຢ່າເປັນຄົນຊອບທັມເກີນໄປ ແລະຢ່າສລາດເກີນຕົວ ເຫດໃດເຈົ້າຈະທຳຕົວໃຫ້ພິນາດແລ້ວຫນໍ

17 ຢ່າອະທັມອີກເລີຍ ຫລືຢ່າເປັນຄົນໂງ່ ເປັນຫຍັງເຈົ້າຈະໄປຕາຍເສັຽກ່ອນເຖິງວາຣະຂອງເຈົ້າຫນໍ

18 ກໍດີຢູ່ແລ້ວທີ່ເຈົ້າຈະຍຶດຖືສິ່ງເຫລົ່ານີ້ໄວ້ ເຈົ້າຢ່າແບມືປ່ອຍສິ່ງນັ້ນໃຫ້ຫລຸດລອຍເສັຽໄປ ເພາະວ່າຜູ້ທີ່ເກງກົວພຣະເຈົ້າຈະພົ້ນຈາກບັນດາສິ່ງທີ່ກ່າວມານີ້

19 ສະຕິປັນຍາເປັນກຳລັງແກ່ຄົນສລາດດີກວ່າຜູ້ຄອບຄອງສິບຄົນທີ່ຢູ່ໃນເມືອງ

20 ແນ່ນອນ ບໍ່ມີຄົນຊອບທັມຈັກຄົນດຽວເທິງແຜ່ນດິນໂລກ ທີ່ໄດ້ປະພຶດລ້ວນແຕ່ຄວາມດີ ແລະບໍ່ກະທຳບາບເລີຍ

21 ຢ່າສົນໃຈຟັງບັນດາຖ້ອຍຄຳທີ່ຄົນອື່ນກ່າວ ຢ້ານວ່າເຈົ້າຈະໄດ້ຍິນທາດຂອງເຈົ້າປ້ອຍດ່າຕົວເຈົ້າ

22 ດ້ວຍວ່າເຈົ້າກໍແຈ້ງຢູ່ກັບໃຈຂອງເຈົ້າເອງຫລາຍຄັ້ງຫລາຍທີບແລ້ວວ່າ ຕົວເຈົ້າເອງໄດ້ປ້ອຍດ່າຄົນອື່ນເໝືອນ
ກັນ

**ການສແວງຫາສະຕິປັນຍາ**

23 ບັນດາຂໍ້ຄວາມເຫລົ່ານີ້ຂ້າພະເຈົ້າໄດ້ພິສູດດ້ວຍໃຊ້ສະຕິປັນຍາແລ້ວ ຂ້າພະເຈົ້າວ່າ, "ຂ້າພະເຈົ້າຈະໄດ້ປັນ
ຍາ" ແຕ່ປັນຍານັ້ນກັບຢູ່ຫ່າງໄກຈາກຂ້າພະເຈົ້າ
24 ສິ່ງທີ່ເປັນຢູ່ກໍຢູ່ໄກ ແລະທີ່ເລິກກໍເລິກລ້ຳເຫລືອເກີນ ໃຜຜູ້ໃດຈະຄົ້ນອອກມາໄດ້
25 ໃຈຂ້າພະເຈົ້າຫວນກັບຄືນມາຮຽນຮູ້ ແລະຊອກກັບສແວງຫາສະຕິປັນຍາ ແລະມູນເຫດຂອງສິ່ງຕ່າງໆ ເພື່ອໃຫ້
ຮູ້ວ່າຄວາມອະທັມເປັນຄວາມໂງ່ ແລະຄວາມໂງ່ເປັນຄວາມບ້າບໍ
26 ຂ້າພະເຈົ້າໄດ້ພົບອີກສິ່ງນຶ່ງຊຶ່ງຂົມຂື່ນຍິ່ງກວ່າຄວາມຕາຍ ຄືຜູ້ຍິງທີ່ມີໃຈເປັນບ່ວງແຮ້ວ ແລະຕາໜ່າງ ມືຂອງ
ນາງເປັນໂສ້ຕວນ ຄົນໃດເປັນຄົນທີ່ພໍພຣະທັຍພຣະເຈົ້າຄົນນັ້ນຈະໜີພົ້ນນາງ ແຕ່ຄົນບາບຈະຖືກຜູ້ຍິງຄົນນັ້ນ
ຈັບເອົາໄປ
27 ປັນຍາຈານກ່າວວ່າ ເບິ່ງແມ່, ຂ້າພະເຈົ້າພົບດັ່ງຕໍ່ໄປນີ້ ໂດຍເອົາເຣື່ອງນຶ່ງມາປະດິດຕິດຕໍ່ເຂົ້າກັບອີກເຣື່ອງນຶ່ງ
ເພື່ອຫາມູນເຫດ
28 ຊຶ່ງຈິດໃຈຂອງຂ້າພະເຈົ້າຍັງກຳລັງຫາແລ້ວຫາອີກ ແຕ່ຂ້າພະເຈົ້າຫາບໍ່ພົບເທື່ອ ໃນຊາຍພັນຄົນຈະພົບຊາຍຈິງ
ຈັກຄົນນຶ່ງ ແຕ່ຈະຫາຍິງແທ້ຈັກຄົນນຶ່ງໃນຈຳນວນພັນຄົນກໍຫາພົບ
29 ເບິ່ງແມ, ຂ້າພະເຈົ້າພົບແຕ່ຄວາມນີ້ຕ່າງຫາກ ຄືພຣະເຈົ້າຊົງສ້າງມະນຸດໃຫ້ເປັນຄົນທ່ຽງທັມ ແຕ່ມະນຸດທັງ
ຫລາຍໄດ້ຄົ້ນກົນອຸບາຍຕ່າງໆອອກມາ

## 8

Obey the King and Enjoy Yourself

1 ໃຜຜູ້ໃດຈະເໝືອນນັກປາດ ຫລືໃຜເດ່ຈະອະທິບາຍສິ່ງອັນໃດກໍໄດ້ ສະຕິປັນຍາຂອງມະນຸດກະທຳໃຫ້ໃບ
ໜ້າຂອງເຂົາຜ່ອງໃສ ແລະໃບໜ້າຂອງເຂົາທີ່ແຂງກະດ້າງກໍປ່ຽນໄປ

**ຈົ່ງເຊື່ອຟັງກະສັດ**

2 ຈົ່ງຖືຮັກສາພຣະບັນຊາຂອງກະສັດ ແລະທີ່ກ່ຽວຂ້ອງກັບຄຳປະຕິຍານອັນສັກສິດຂອງທ່ານນັ້ນ ຢ່າເມີນເສີຍ
3 ຢ່າຟ້າວອອກໄປໃຫ້ພົ້ນພຣະພັກກະສັດ ເມື່ອມີເຫດການບໍ່ດີເກີດຂຶ້ນ ຢ່າຂັດຂືນ ເພາະກະສັດຍ່ອມຊົງກະທຳ
ສິ່ງໃດໆຕາມຊອບພຣະທັຍພຣະອົງ
4 ດ້ວຍວ່າພຣະດຳຣັດຂອງກະສັດນັ້ນມີອຳນາດ ແລະໃຜຜູ້ໃດຈະຂາບທູນຖາມພຣະອົງໄດ້ວ່າ, "ຝ່າພຣະ
ບາດຊົງກະທຳເຊັ່ນນັ້ນ"
5 ຜູ້ທີ່ກະທຳຕາມພຣະບັນຊາຈະບໍ່ປະສົບອັນຕະລາຍ ແລະຈິດໃຈຂອງຄົນທີ່ມີສະຕິປັນຍາກໍເຂົ້າໃຈ ວາຣະແລະ
ວິທີການ

**ທາງຂອງພຣະເຈົ້າໜືອສະຕິປັນຍາຂອງມະນຸດ**

6 ດ້ວຍວ່າບໍ່ວ່າສິ່ງໃດທັງນັ້ນຍ່ອມມີວາຣະ ແລະວິທີການ ແມ້ວ່າຄວາມລຳບາກຂອງມະນຸດເປັນພາຣະໜັກແກ່
ຕົວເຂົາ
7 ດ້ວຍເຂົາບໍ່ຮູ້ວ່າສິ່ງໃດຈະເກີດຂຶ້ນ ດ້ວຍໃຜຈະບອກແກ່ເຂົາໄດ້ວ່າສິ່ງນັ້ນຈະເກີດຂຶ້ນຢ່າງໃດ
8 ບໍ່ມີມະນຸດຄົນໃດຢັ້ງຈິດວິນຍານໄດ້ ຫລືບໍ່ມີອຳນາດໃດເໜືອວັນຕາຍ ການສົງຄາມຍ່ອມບໍ່ມີການປົດປ່ອຍ
ຄວາມອະທັມຍ່ອມບໍ່ຊ່ອຍຜູ້ທີ່ຖືກມອບໃຫ້ໄວ້

9 ບັນດາການນີ້ຂ້າພະເຈົ້າເຫັນຫມົດແລ້ວ ເມື່ອຂ້າພະເຈົ້າສົນໃຈກິຈການທຸກຢ່າງທີ່ເຂົາກະທຳກັນພາຍໃຕ້ດວງຕາເວັນ ມີວາຣະຊຶ່ງໃຫ້ຄົນນຶ່ງມີອຳນາດເຫນືອອີກຄົນນຶ່ງທີ່ຈະມາທຳອັນຕະລາຍເຂົາ

God's Ways Are Inscrutable

10 ຂ້າພະເຈົ້າໄດ້ເຫັນເຂົາຝັງຄົນອະທັມ ຜູ້ຊຶ່ງເຄີຍເຂົ້າອອກທີ່ສະຖານບໍຣິສຸດ ແລະມີຄົນຍົກຍ້ອງເຂົາໃນເມືອງທີ່ຄົນອະທັມນັ້ນເອງກະທຳສິ່ງນັ້ນ ນີ້ກໍອະນິຈັງ

11 ເພາະການຕັດສິນການກະທຳຊົ່ວນັ້ນ ເຂົາບໍ່ໄດ້ລົງໂທດໂດຍໄວ ເຫດສະນັ້ນໃຈບັນດາບຸດຂອງມະນຸດຈຶ່ງເຈຕນາມຸ່ງທີ່ຈະກະທຳຄວາມອະທັມ

12 ເຖິງແມ່ນວ່າຄົນບາບ ທຳຊົ່ວຕັ້ງຮ້ອຍເທື່ອ ແລະອາຍຸເຂົາຍັງຍັ້ງຍືນຢູ່ໄດ້ ເຖິງປານນັ້ນຂ້າພະເຈົ້າຍັງຮູ້ແນ່ວ່າຈະເປັນໄປໂດຍດີແກ່ເຂົາທັງຫລາຍທີ່ຢຳເກງພຣະເຈົ້າ ຄືທີ່ມີຄວາມຢຳເກງຕໍ່ພຣະພັກພຣະອົງ

13 ແຕ່ວ່າຈະບໍ່ເປັນໄປໂດຍດີແກ່ຄົນອະທັມ ອາຍຸຂອງເຂົາທີ່ເປັນດັ່ງເງົາກໍຈະບໍ່ຍືນຍາວອອກໄປໄດ້ ເພາະເຂົາບໍ່ມີຄວາມຢຳເກງຕໍ່ພຣະພັກພຣະເຈົ້າ

14 ຍັງມີອະນິຈັງອີກຢ່າງນຶ່ງທີ່ກະທຳກັນເທິງແຜ່ນດິນໂລກ ຄືມີຄົນຊອບທັມຮັບເຄາະອັນເປັນເຄາະທີ່ຄົນອະທັມຄວນຮັບ ແລະມີຄົນອະທັມຮັບເຄາະອັນເປັນເຄາະທີ່ຄົນຊອບທັມຄວນຮັບ ຂ້າພະເຈົ້າກ່າວໄດ້ວ່າ ນີ້ກໍເປັນອະນິຈັງດ້ວຍ

15 ແລ້ວຂ້າພະເຈົ້າຈຶ່ງສນັບສນູນໃຫ້ຫາຄວາມສນຸກສນານ ດ້ວຍວ່າພາຍໃຕ້ດວງຕາເວັນ ມະນຸດບໍ່ມີອັນໃດດີໄປກວ່າກິນແລະດື່ມກັບຊື່ນຊົມຍິນດີ ດ້ວຍວ່າອາການນີ້ຮ່ວມໄປໃນການງານຂອງຕົນຕລອດຊີວິດຂອງຕົນ ທີ່ພຣະເຈົ້າຊົງໂຜດປະທານແກ່ຕົນພາຍໃຕ້ດວງຕາເວັນ

16 ເມື່ອຂ້າພະເຈົ້າຕັ້ງໃຈຈະເຂົ້າໃຈສະຕິປັນຍາ ແລະຮູ້ທຸຣະກິດທີ່ກະທຳກັນໃນໂລກ ທີ່ເຂົາອົດຫລັບອົດນອນທຳກັນຕລອດວັນຕລອດຄືນ

17 ແລ້ວຂ້າພະເຈົ້າຈຶ່ງເຫັນພາຣະກິດຂອງພຣະເຈົ້າວ່າ ມະນຸດຈະຄົ້ນຫາຄວາມເຂົ້າໃຈໃນພຣະພາຣະກິດທີ່ບັງເກີດຢູ່ພາຍໃຕ້ດວງອາທິດຫາບໍ່ໄດ້ ເພາະວ່າມະນຸດຈະອອກແຮງຄົ້ນຫາປານໃດກໍຍັງຈະຄົ້ນຫາໃຫ້ພົບບໍ່ໄດ້ ນອກຈາກນີ້ແມ້ວ່ານັກປາດຄົນໃດນຶກເອົາວ່າເຂົາຈະເຂົ້າໃຈແລ້ວ ເຂົາກໍຍັງຄົ້ນຫາບໍ່ພົບ

## 9 ຄວາມເຫລື່ອມລ້ຳຂອງຊີວິດ

Take Life as It Comes

1 ຂ້າພະເຈົ້າໄດ້ນຳເຣື່ອງລາວເຫລົ່ານີ້ມາຄິດ ກວດພິຈາຣະນາເບິ່ງວ່າ ຄົນຊອບທັມ ແລະຄົນມີສະຕິປັນຍາຮວມທັງກິຈການຂອງເຂົາທັງຫລາຍ ກໍຢູ່ໃນພຣະຫັດຂອງພຣະເຈົ້າ ຈະຊົງຮັກຫລືຊົງກຽດຊັງກໍຕາມ ມະນຸດກໍບໍ່ຮູ້ທຸກຢ່າງກໍຢູ່ຕໍ່ຫນ້າເຂົາ ທັງຫລາຍ

2 ເຄາະອັນດຽວກັນຕົກແກ່ຄົນທັງປວງເຫມືອນກັນຫມົດ ຄືຕົກແກ່ຄົນຊອບທັມ ແລະຄົນອະທັມ ຕົກແກ່ຄົນດີຕົກແກ່ຄົນສະອາດ ແລະຄົນທີ່ມີມົນທິນ ຕົກແກ່ຜູ້ທີ່ຖວາຍສັຕບູຊາ ແລະແກ່ຜູ້ທີ່ບໍ່ຖວາຍ
ສັຕບູຊາ ຕົກແກ່ຄົນດີຢ່າງໃດກໍຕົກແກ່ຄົນບາບຢ່າງນັ້ນ ຕົກແກ່ຄົນສາບານຢ່າງໃດກໍຕົກແກ່ຄົນບໍ່ກ້າສາບານຢ່າງນັ້ນ

3 ນີ້ແຫລະເປັນສິ່ງຊົ່ວທີ່ມີຢູ່ໃນບັນດາການທີ່ບັງເກີດຂຶ້ນພາຍໃຕ້ດວງຕາເວັນ ຄືວ່າມີເຄາະອັນດຽວກັນທີ່ຕົກແກ່ຄົນທັງປວງ ຈິດໃຈຂອງມະນຸດກໍເຕັມໄປດ້ວຍຄວາມຊົ່ວ ແລະຄວາມບ້າບໍ່ຢູ່ໃນໃຈຂອງເຂົາເມື່ອມີຊີວິດ ແລະຕໍ່ຈາກນັ້ນເຂົາກໍໄປຢູ່ກັບຄົນຕາຍ

4 ສ່ວນຄົນໃດທີ່ມົ້ວສຸມກັບຄົນທີ່ມີຊີວິດ ຄົນນັ້ນກໍມີຄວາມຫວັງໃຈໄດ້ ດ້ວຍວ່າຫມາທີ່ມີຊີວິດກໍຍັງດີກວ່າສິງທີ່ຕາຍແລ້ວ

5 ເພາະວ່າຄົນເປັນຍ່ອມຮູ້ວ່າເຂົາເອງຄົງຈະຕາຍ ແຕ່ຄົນຕາຍແລ້ວກໍບໍ່ຮູ້ອັນໃດເລີຍ ເຂົາບໍ່ໄດ້ຮັບລາງວັນອີກ ດ້ວຍວ່າໃຜໆກໍພາກັນລືມເຂົາເສັຽຫມົດ

6 ຄວາມຮັກຂອງເຂົາບໍ່ຫນ້ອຍກວ່າຄວາມຊັງ ແລະຄວາມອິດສາຂອງເຂົາໄດ້ສາບສູນໄປຕາມກັນນານມາແລ້ວ ໃນບັນດາການທີ່ບັງເກີດຂຶ້ນພາຍໃຕ້ດວງຕາເວັນ ເຂົາທັງຫລາຍບໍ່ມີສ່ວນຮ່ວມອີກຕໍ່ໄປ

7 ໄປເຖີດ ໄປຮັບປະທານອາຫານຂອງເຈົ້າດ້ວຍຄວາມຊື່ນຊົມ ແລະໄປດື່ມເຫລົ້າອະງຸ່ນຂອງເຈົ້າດ້ວຍຄວາມລ້າເລີງ ເພາະ ພຣະເຈົ້າຊົງເຫັນຊອບກັບການງານຂອງເຈົ້າແລ້ວ

8 ຈົ່ງໃຫ້ເສື້ອຜ້າຂອງເຈົ້າຂາວຢູ່ສເມີ ແລະນ້ຳມັນທີ່ຫົວຂອງເຈົ້າກໍຢ່າໃຫ້ຂາດ

9 ເຈົ້າຈົ່ງຢູ່ກິນດ້ວຍຄວາມຊົມຊື່ນຍິນດີກັບພັຣຍາຊຶ່ງເຈົ້າຮັກຕລອດຊີວິດອະນິຈັງຂອງເຈົ້າ ຊຶ່ງພຣະອົງໄດ້ປະທານໃຫ້ແກ່ເຈົ້າພາຍໃຕ້ດວງຕາເວັນ ຕລອດປີເດືອນອະນິຈັງຂອງເຈົ້າ ດ້ວຍວ່ານັ້ນເປັນສ່ວນໃນຊີວິດ ແລະໃນການງານຂອງເຈົ້າ ຊຶ່ງເຈົ້າໄດ້ອອກແຮງກະທຳພາຍໃຕ້ດວງຕາເວັນ

10 ມືຂອງເຈົ້າຈັບທຳການງານອັນໃດ ຈົ່ງກະທຳການນັ້ນດ້ວຍເຕັມກຳລັງຂອງເຈົ້າ ເພາະວ່າໃນແດນຄົນຕາຍທີ່ເຈົ້າຈະໄປນັ້ນບໍ່ມີການງານຫລືແນວຄິດ ຫລືຄວາມຮູ້ ຫລືສະຕິປັນຍາ

11 ຂ້າພະເຈົ້າໄດ້ເຫັນພາຍໃຕ້ດວງຕາເວັນອີກວ່າ ຄົນໄວບໍ່ຊະນະໃນການແລ່ນແຂ່ງສເມີໄປ ຫລືຄົນສລາດບໍ່ຮັບປະທານສເມີໄປ ຫລືຄົນມີຄວາມເຂົ້າໃຈບໍ່ຮັ່ງມີສເມີໄປ ຫລືຜູ້ທີ່ຊຳນານບໍ່ໄດ້ຮັບຄວາມໂປດປານສເມີໄປ ແຕ່ວາຣະ ແລະໂອກາດມີມາເຖິງເຂົາທຸກຄົນ

12 ເພາະວ່າມະນຸດບໍ່ຮູ້ວາຣະຂອງຕົນ ດັ່ງປາທີ່ຖືກຕິດຢູ່ໃນມອງອັນຮ້າຍສັນໃດ ແລະນົກຖືກດັກຕິດຢູ່ໃນບ້ວງແຮ້ວສັນໃດ ວາຣະອັນຮ້າຍກໍມາເຖິງບັນດາບຸດຂອງມະນຸດ ເຂົາກໍຖືກວາຣະອັນຮ້າຍນັ້ນດັກຈັບຊື່ວບຶດດຽວເຫມືອນກັນສັນນັ້ນ

**ສະຕິປັນຍາກໍດີກວ່າກຳລັງວັງຊາ**

Wisdom Superior to Folly

13 ຂ້າພະເຈົ້າເຫັນເຣື່ອງສະຕິປັນຍາພາຍໃຕ້ດວງຕາເວັນ ເຫັນວ່າເປັນເຣື່ອງທີ່ໃຫຍ່ດັ່ງຕໍ່ໄປນີ້

14 ຍັງມີເມືອງນ້ອຍໆ ເມືອງນຶ່ງມີຄົນຢູ່ໃນເມືອງຫນ້ອຍຄົນ ແລ້ວມີມະຫາຣາຊາມາຕີເມືອງນັ້ນ ແລະລ້ອມເມືອງນັ້ນໄວ້ ແລະສ້າງເຄື່ອງລ້ອມໄວ້ຮອບເມືອງ

15 ແຕ່ໃນເມືອງນັ້ນມີຊາຍສລາດແຕ່ຍາກຈົນຢູ່ຄົນນຶ່ງ ແລະຊາຍຄົນນີ້ຊ່ອຍເມືອງນັ້ນໄວ້ໃຫ້ລອດດ້ວຍປັນຍາຂອງຕົນ ແຕ່ຫາກບໍ່ມີໃຜຈົດຈຳລະນຶກເຖິງຊາຍຍາກຈົນຄົນນີ້

16 ແຕ່ຂ້າພະເຈົ້າວ່າ ສະຕິປັນຍາກໍດີກວ່າກຳລັງວັງຊາ ເຖິງສະຕິປັນຍາຂອງຊາຍຄົນນັ້ນຖືກດູຫມິ່ນ ແລະຖ້ອຍຄຳຂອງເຂົາບໍ່ມີໃຜຟັງກໍຕາມ

17 ຖ້ອຍຄຳຂອງຄົນສລາດຊຶ່ງໄດ້ຍິນໃນທີ່ສງັດດີກວ່າຟັງສຽງຮ້ອງຂອງຜູ້ຄອບຄອງຄົນໂງ່

18 ສະຕິປັນຍາດີກວ່າເຄື່ອງອາວຸດ ແຕ່ຄົນບາບຄົນດຽວຍ່ອມລົບຄວາມດີໄດ້ຢ່າງຫລວງຫລາຍ

## 10 ຜົນຂອງຄວາມໂງ່

Miscellaneous Observations

1 ແມງວັນຕາຍ ຍ່ອມທຳໃຫ້ນ້ຳມັນທີ່ກິ່ນຫອມບູດເຫມັນໄປ ຄວາມໂງ່ຫນ້ອຍນຶ່ງ ກໍຫນັກກວ່າສະຕິປັນຍາແລະກຽດຕິຍົດ

2 ຈິດໃຈຂອງຄົນທີ່ມີສະຕິປັນຍາ ຍ່ອມຢູ່ຂ້າງຂວາມືຂອງຕົນ ແຕ່ຈິດໃຈຂອງຄົນໂງ່ ຍ່ອມຢູ່ທີ່ຂ້າງມືຊ້າຍຂອງຕົນ

3 ເມື່ອຄົນໂງ່ກຳລັງຍ່າງໄປຕາມທາງ ເຂົາກໍຂາດສຳນຶກ ແລະຕົວເຂົາມັກສະແດງແກ່ທຸກຄົນວ່າ ຕົນເປັນຄົນໂງ່

4 ຖ້າໃຈຂອງເຈົ້ານາຍເກີດໂມໂຫຂຶ້ນຕໍ່ທ່ານ ຢ່າອອກເສັ້ງຈາກທີ່ຂອງທ່ານ ເພາະວ່າອາຣົມເຢັນຍ່ອມລະງັບ ຄວາມຜິດອັນໃຫຍ່ຫລວງໄວ້ໄດ້

5 ມີສິ່ງຊົ່ວທີ່ຂ້າພະເຈົ້າເຫັນພາຍໃຕ້ດວງຕາເວັນ ເຫມືອນວ່າເປັນຄວາມຜິດຊຶ່ງຈາກຜູ້ມີອຳນາດ

6 ຄືຄົນໂງ່ຖືກແຕ່ງຕັ້ງໄວ້ໃນຕຳແຫນ່ງໃຫຍ່ສູງ ແລະຄົນຮັ່ງມີຮັບຕຳແຫນ່ງຕ່ຳຕ້ອຍ

7 ຂ້າພະເຈົ້າເຫັນທາດຂີ່ມ້າ ແລະເຈົ້ານາຍຍ່າງທີ່ພື້ນແຜ່ນດິນຢ່າງທາດ

8 ຜູ້ໃດຂຸດບໍ່ໄວ້ ຜູ້ນັ້ນຈະຕົກລົງໃນບໍ່ນັ້ນ ຜູ້ໃດພັງກຳແພງທະລຸເຂົ້າໄປ ງູຈະຕອດຜູ້ນັ້ນ

9 ຜູ້ໃດສະກັດຫີນ ຜູ້ນັ້ນອາດເຈັບເພາະຫີນນັ້ນ ຜູ້ໃດຜ່າຂອນໄມ້ ຜູ້ນັ້ນຈະປະສົບອັນຕະຣາຍເພາະຂອນໄມ້ນັ້ນ ໄດ້

10 ຖ້າຂວານປູ້ແລ້ວ ແລະເຂົາບໍ່ລັບໃຫ້ຄົມ ເຂົາກໍຕ້ອງອອກແຮງຫລາຍ ແຕ່ສະຕິປັນຍາຈະຊ່ອຍໃຫ້ບັນລຸຄວາມ ສຳເຣັດ

11 ຖ້າງູຕອດເສັ້ງກ່ອນທີ່ທຳໃຫ້ມັນເຊື່ອງ ຫມໍງູກໍບໍ່ເປັນປໂຍດອັນໃດແລ້ວ

12 ຖ້ອຍຄຳຈາກປາກຂອງຜູ້ມີສະຕິປັນຍາກໍມີຄຸນ ແຕ່ຮີມຝີປາກຂອງຄົນໂງ່ຈະເຜົາຜານຕົວເອງເສັ້ງ

13 ຖ້ອຍຄຳຈາກປາກຂອງເຂົາເປັນຄວາມໂງ່ຕັ້ງແຕ່ເລີ້ມເວົ້າ ຕອນຈົບກໍເປັນຄວາມບ້າບໍ່ຢ່າງຮ້າຍ

14 ຄົນໂງ່ເວົ້າຫລາຍຊ້ຳຊາກ ມະນຸດຫາກຮູ້ບໍ່ວ່າເຫດອັນໃດຈະບັງເກີດຂຶ້ນ ໃຜເດ່ຈະບອກເຂົາໄດ້ວ່າມີຫຍັງເກີດ ຂຶ້ນເມື່ອເຂົາລ່ວງໄປ

15 ການງານຂອງຄົນໂງ່ກະທຳໃຫ້ເຂົາອິດເມື່ອຍ ດ້ວຍວ່າເຂົາບໍ່ຮູ້ຈັກທາງທີ່ຈະເຂົ້າໄປໃນເມືອງ

16 ໂອ ບ້ານເມືອງເອີຍ ວິບັດແກ່ເຈົ້າ ເມື່ອກະສັດຂອງເຈົ້າເປັນເດັກ ແລະເຈົ້ານາຍທັງຫລາຍຂອງເຈົ້າມີການລ້ຽງ ກັນສນຸກ   ສນານແຕ່ເຊົ້າ

17 ໂອ ບ້ານເມືອງເອີຍ ຄວາມສຳຣານຈະມີແກ່ເຈົ້າ ເມື່ອກະສັດຂອງເຈົ້າເປັນເຊື້ອຂຸນນາງ ແລະເຈົ້ານາຍຂອງ ເຈົ້າມີການ    ລ້ຽງຕາມກາລະເທສະ ເພື່ອຈະມີກຳລັງວັງຊາ ບໍ່ແມ່ນຈະດື່ມໃຫ້ມືນເມົາ

18 ເພາະຄວາມຂີ້ຄ້ານ ຫລັງຄາຈຶ່ງຫັກພັງລົງ ແລະເພາະຄວາມຂີ້ຄ້ານເຮືອນຈຶ່ງຮົ່ວ

19 ເຂົາທຳອາຫານໄວ້ເພື່ອໃຫ້ຄົນຫົວເລາະ ແລະເຫລົ້າອະງຸ່ນທຳໃຫ້ຊີວິດຊື່ນບານ ແລະເງິນທີ່ຈັດໃຫ້ໄດ້ທຸກຢ່າງ

20 ຢ່າປ້ອຍດ່າພຣະຣາຊາ ແມ້ແຕ່ຄິດປ້ອຍດ່າໃນໃຈກໍຢ່າເລີຍ ແລະຢ່າປ້ອຍຄົນຮັ່ງມີທີ່ໃນຫ້ອງນອນຂອງເຈົ້າ ເພາະນົກໃນອາກາດຈະຄາບສຽງຂອງເຈົ້າໄປ ຫລືຕົວທີ່ມີປີກຈະເລົ່າເຣື່ອງນັ້ນ

## 11 ຄວາມປະພຶດຂອງຄົນມີປັນຍາ

The value of Diligence

1 ຈົ່ງໂຍນເຂົ້າຫນົມປັງຂອງເຈົ້າລົງເທິງນ້ຳອີກຫລາຍມື້ເຈົ້າຈະພົບມັນໄດ້

2 ຈົ່ງປັນສ່ວນນຶ່ງໃຫ້ແກ່ຄົນເຈັດຄົນ ຫລືເຖິງແປດຄົນກໍໃຫ້ເຖີດ ເພາະເຈົ້າບໍ່ຮູ້ວ່າສິ່ງສາມານຢ່າງໃດຈະບັງເກີດ ຂຶ້ນເທິງພື້ນແຜ່ນດິນ

3 ຖ້າບັນດາເມກມີຝົນຢູ່ເຕັມ ມັນກໍຈະເຫລົງມາຫມົດເທິງແຜ່ນດິນໂລກ ແລະຖ້າຕົ້ນໄມ້ລົ້ມລົງທາງໃຕ້ ຫລືທາງ ເຫນືອ ມັນລົ້ມລົງທາງໃດມັນກໍນອນຢູ່ທາງນັ້ນ

4 ຜູ້ໃດມົວສັງເກດລົມກໍຈະບໍ່ຫວ່ານພືດ ແລຜູ້ທີ່ມອງເບິ່ງເມກກໍຈະບໍ່ກ່ຽວເຂົ້າ

5 ເຈົ້າບໍ່ຮູ້ທາງລົມວ່າໄປທາງໃດ ແລະກະດູກມີຂຶ້ນໃນມົດລູກຂອງຍິງທີ່ມີຄັນຢ່າງໃດສັນໃດ ເຈົ້າກໍຈະບໍ່ຮູ້ເຖິງກິຈ ການຂອງພຣະເຈົ້າຜູ້ຊົງກະທຳສິ່ງສາຣະພັດສັນນັ້ນ

6 ເວລາເຊົ້າເຈົ້າຈົ່ງຫວ່ານພືດຂອງເຈົ້າ ແລະພໍເວລາຄ່ຳກໍຢ່າຫົດມືຂອງເຈົ້າເສັ້ງ ເພາະເຈົ້າຫາກຮູ້ບໍ່ວ່າການໃດ ຈະຈະເຣີນ ການນີ້ຫລືການນັ້ນ ຫລືການທັງສອງຈະຈະເຣີນດີເຫມືອນກັນ

Youth and Old Age

7 ແສງສວ່າງເປັນທີ່ຊື່ນໃຈ ແລະການທີ່ຕາເຫັນດວງຕາເວັນກໍເປັນທີ່ຊື່ນບານ

8 ຖ້າຄົນໃດມີຊີວິດຢູ່ໄດ້ຕັ້ງຫລາຍປີ ຈົ່ງໃຫ້ເຂົາຍິນດີໃນປີເດືອນເຫລົ່ານັ້ນ ແຕ່ໃຫ້ເຂົາລະນຶກເຖິງວ່າ ວັນມືດກໍມີ
ຫລາຍ ບັນດາເຫດການທີ່ເກີດຂຶ້ນມານັ້ນກໍອະນິຈັງ

**ແນະນຳເຍົາວະຊົນ**

9 ໂອ ເຍົາວະຊົນ ຈົ່ງຍິນດີໃນວັຍຫນຸ່ມຂອງເຈົ້າ ແລະໃຫ້ຈິດໃຈຂອງເຈົ້າກະທຳຕົວເຈົ້າລ້າເລີງໃນວັຍຫນຸ່ມຂອງ
ເຈົ້າ ເຈົ້າຈົ່ງດຳເນີນໃນທາງແຫ່ງໃຈຂອງເຈົ້າ ແລະຕາມສາຍຕາຂອງເຈົ້າ ແຕ່ຈົ່ງຮູ້ວ່າເນື່ອງດ້ວຍກິຈການງານ
ທັງປວງເຫລົ່ານີ້ ພຣະເຈົ້າຈະຊົງນຳເຈົ້າເຂົ້າມາເຖິງການພິພາກສາ

10 ຈົ່ງຕັດຄວາມເສົ້າຫມອງເສັຽຈາກໃຈຂອງເຈົ້າ ແລະຈົ່ງຖິ້ມຄວາມເຈັບປວດເສັຽຈາກເນື້ອຫນັງຂອງເຈົ້າເພາະ
ຄວາມຫນຸ່ມສາວແລະວັຍສະກັນນັ້ນເປັນອະນິຈັງ

## 12

Chapter 12

1 ໃນວັຍຫນຸ່ມຂອງເຈົ້າ ເຈົ້າຈົ່ງລະນຶກເຖິງພຣະຜູ້ເນຣະມິດສ້າງຂອງເຈົ້າ ກ່ອນທີ່ຍາມທຸກຮ້ອນຈະມາເຖິງ ແລະ
ປີເດືອນໃກ້ເຂົ້າມາ ເມື່ອເຈົ້າຈະກ່າວວ່າ, "ຂ້າບໍ່ມີຄວາມເພີດເພີນໃນປີເດືອນນັ້ນເລີຍ"

2 ກ່ອນທີ່ດວງຕາເວັນ ແສງສວ່າງ ດວງຈັນ ແລະດວງດາວທັງຫລາຍສິ້ນແສງ ແລະກ່ອນທີ່ເມກກັບມາເມື່ອຫມົດ
ຝົນແລ້ວ

3 ໃນການເມື່ອຄົນຍາມເຝົ້າເຮືອນຈະຕົວສັ່ນ ແລະຄົນແຂງແຮງຈະອ່ອນເພັຽລົງ ແລະຍິງໂມ້ຈະເລີກໂມ້ ເພາະ
ຈຳນວນລົດນ້ອຍລົງ ແລະບັນດາຜູ້ທີ່ສ່ອງເບິ່ງປ່ອງຢ້ຽມຈະມືດມົວໄປ

4 ແລະປະຕູຄູ່ທີ່ເປີດອອກຖນົນຈະປິດເສັຽ ເມື່ອສຽງໂມ້ຄ່ອຍລົງມີສຽງນົກສຽງກາເຂົາຈະລຸກຂຶ້ນ ແລະສຽງເພງກໍ
ເບົາລົງ

5 ເຂົາທັງຫລາຍຢ້ານຄວາມສູງ ແລະສິ່ງຫນ້າສຍົດສຍອງກໍຢູ່ໃນຫົນທາງ ຕົ້ນອັລມອນມີດອກ ແລະຕັກແຕນ
ໂມເປັນພາຣະ ຄວາມປາຖນາກໍເສື່ອມລົງ ເພາະມະນຸດກຳລັງໄປບ້ານອັນຖາວອນຂອງເຂົາ ສ່ວນຜູ້ໄວ້ທຸກກໍ
ວຽນໄປມາຕາມຖນົນ

6 ກ່ອນທີ່ສາຍເງິນຈະຂາດ ຫລືຊາມຄຳຈະບັນລັຍ ຫລືໄຫນ້ຳຈະແຕກເສັຽທີ່ນ້ຳພຸ ຫລືລໍ້ຈະຫັກເສັຽໃນທີ່ຂັງນ້ຳ

7 ແລະຜົງຂີ້ດິນກັບເປັນດິນຢ່າງເດີມ ແລະຈິດວິນຍານກັບໄປສູ່ພຣະເຈົ້າຜູ້ປະທານໃຫ້ມານັ້ນ

8 ປັນຍາຈານວ່າ ອະນິຈັງ ອະນິຈັງ ສາຣະພັດອະນິຈັງ

**ຫນ້າທີ່ທັງສິ້ນຂອງມະນຸດ**

Epilogue

9 ນອກຈາກທ່ານເປັນຄົນສລາດແລ້ວ ປັນຍາຈານຍັງສອນຄວາມຮູ້ໃຫ້ປະຊາຊົນອີກດ້ວຍ ທ່ານວິເຄາະ ທ່ານຄົ້ນ
ຄວ້າ ແລະທ່ານຮຽບຮຽງສຸພາສິດ

10 ປັນຍາຈານຊອກຫາຖ້ອຍຄຳທີ່ມ່ອນຫູ ແລະທ່ານຂຽນຖ້ອຍຄຳແຫ່ງຄວາມຈິງໄວ້ຢ່າງທ່ຽງຕົງ

11 ຖ້ອຍຄຳຂອງນັກປາດເປັນໄມ້ເທົ້າອັນແຫລມຄົມ ແລະຖ້ອຍຄຳທີ່ທ່ານຮອບຮວມໄວ້ກໍຕຶງແຫນ້ນຢ່າງຕະປູ ທີ່
ຄົນລ້ຽງແກະໃຊ້ເພື່ອນຳພາຝູງແກະ

12 ບຸດຊາຍຂອງຂ້າພະເຈົ້າເອີຍ ຈົ່ງຮັບຄຳຕັກເຕືອນເຖີດ ຊຶ່ງຈະທຳຫນັງສືຫລາຍກໍບໍ່ມີສິ້ນສຸດ ແລະຮຽນຫລາຍກໍ
ເມື່ອຍເນື້ອຫນັງ

13 ຈົບເຣື່ອງແລ້ວ ໄດ້ຟັງກັນທັງຫມົດແລ້ວ ຈົ່ງຢຳເກງພຣະເຈົ້າ ແລະຮັກສາພຣະບັນຍັດຂອງພຣະອົງ ເພາະນີ້
ແຫລະເປັນຫນ້າທີ່ຂອງມະນຸດທັງປວງ
14 ດ້ວຍວ່າ ພຣະເຈົ້າຈະຊົງເອົາການງານທຸກປະການເຂົ້າສູ່ການພິພາກສາ ພ້ອມດ້ວຍສິ່ງເລິກລັບທຸກຢ່າງ ບໍ່ວ່າ
ດີຫລືຊົ່ວ